ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການກະຊວງ

ເລກທີ: 1061-ຮ /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 06/04/2026

ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກົມການຈັດຫາງານ, ໂຄງການເສີມສ້າງທັກສະທີ່ເປັນບຸລິມະສິດ ສຳລັບການເຕີບໂຕຂອງ ສປປ ລາວ ໄດ້ຮັບອະນຸມັດງົບປະມານປະຈຳສົກປີ 2026 ເພື່ອດຳເນີນການ ປະມູນຈັດຊື້ ອຸປະກອນສຳລັບ ປະກອບອາຊີບອິດສະຫລະ ຄື: ອຸປະກອນ ຕ່ຳຫູກ ແລະ ຍ້ອມຜ້າ (Weaving accessories) C2.2-G-12.3 ດ້ວຍການປະມູນແບບສົມທຽບລາຄາ.
2. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກົມການຈັດຫາງານ, ໂຄງການເສີມສ້າງທັກສະທີ່ເປັນບຸລິມະສິດ ສຳລັບການເຕີບໂຕຂອງ ສປປ ລາວ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການຈັດຊື້ ອຸປະກອນ ດັ່ງກ່າວ ໄລຍະເວລາໃນການສົ່ງມອບ ຫລື ການບໍລິການ ແມ່ນ [45 ວັນ].
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ **10:30 ໂມງ ວັນທີ 04 ພຶດສະພາ 2026 ທີ່ຫ້ອງປະຊຸມ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຊັ້ນ 03), ບ້ານ ໂພນສະຫວ່າງ ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 56644188, 020 29773848.**
5. **Email:** psgproject.proc@gmail.com, phetchinda2016@hotmail.com; sing_shl27@hotmail.com ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ **10:40 ໂມງ ວັນທີ ວັນທີ 04 ພຶດສະພາ 2026** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

ຫົວໜ້າຫ້ອງການ
(ຫົວໜ້າໂຄງການ)

ບຸນຍອດ ຈັນທະວອນ